## ຊີວິດໃນຊຸມຊົນຂອງທ່ານຈະດີຂຶ້ນບໍ ຖ້າຫາກວ່າ:

- ທ່ານສາມາດເຂົ້າເຖິງໂຮງໝໍໃໝ່ໆ ແລະສູນບໍລິການຜູ້ສູງອາຍຸ, ຫຼື ຮັບການບໍລິການດູແລສຸຂະພາບທີ່ໄດ້ຮັບການປັບປຸງ ສໍາຫຼັບສະມາຊິກໃນຄອບຄົວທີ່ເຈັບປ່ວຍ ຫຼື ແກ່ຊະລາ?
- ລູກຂອງທ່ານສາມາດໄປເຂົ້າຮຽນທີ່ໂຮງຮຽນ ຫຼື ສູນຮັບຝາກເດັກແຫ່ງໃໝ່ ຫຼື ທີ່ພັດທະນາປັບປຸງແລ້ວ?
- ການເດີນທາງໄປເຮັດວຽກຂອງທ່ານໄດ້ມີຄວາມປອດພັຍຫຼາຍຂຶ້ນ ແລະແອອັດໜ້ອຍລົງ, ເນື່ອງຈາກມີຖະໜົນຫົນທາງທີ່ດີຂຶ້ນ ຫຼື ມີທາງເລືອກໃນການໃຊ້ບໍລິການຂົນສົ່ງສາທາລະນະເພີ່ມຂຶ້ນ?
- ທ່ານໄດ້ມີໂອກາດຮັບການຝຶກອົບຮົມດ້ານອາຊີບຫຼາຍຂຶ້ນຊຶ່ງຈະຊ່ວຍໃຫ້ທ່ານໄດ້ມີໂອກາດໄດ້ງານທີ່ດີຂຶ້ນກວ່າເກົ່າ?
- ຕະຫຼາດທ້ອງຖິ່ນສາມາດສົ່ງມອບສິນຄ້າແລະການບໍລິການທີ່ດີກວ່າເກົ່າໃຫ້ແກ່ຊຸມຊົນຂອງທ່ານ?



ການສໍາຫຼວດປະຊາກອນປີ 2010 ສາມາດຊ່ວຍປັບປຸງພັດທະນາຊຸມຊົນຂອງທ່ານ ໂດຍການຊ່ວຍໃຫ້ໄດ້ຮັບເງິນສ່ວນແບ່ງຫຼາຍກວ່າ 400 ຕື້ໂດລາຕໍ່ປີ ຈາກກອງທຶນຣັຖບານກາງ. ກອງທຶນນັ້ນແມ່ນຖືກຈັດສັນໃຫ້ແກ່ຣັຖບານແຫ່ງຣັຖ ແລະທ້ອງຖິ່ນໂດຍອີງຕາມຂໍ້ມູນການສໍາຫຼວດປະຊາກອນ, ແລະສາມາດນໍາໄປໃຊ້ໃນການພັດທະນາປັບປຸງສິ່ງຈໍາເປັນສໍາຫຼັບຊຸມຊົນຂອງທ່ານ ແລະ ຂໍ້ມູນທັງໝົດທີ່ທ່ານໃຫ້ໄວ້ໃນແບບຟອມການສໍາຫຼວດປະຊາກອນປີ 2010 ຂອງທ່ານນັ້ນຈະຖືກເກັບຮັກສາເປັນຄວາມລັບຢ່າງສົມບູນແລະໄດ້ຮັບການປົກປ້ອງຕາມກົດໝາຍໂດຍອົງການຂອງຣັຖບານທຸກແຫ່ງ.

**ອະນາຄົດຂອງຊຸມຊົນຂອງທ່ານ.**
**ອະນາຄົດຂອງຄອບຄົວຂອງທ່ານ. ອະນາຄົດຂອງທ່ານ.**

ຣັຖບານສະຫະຣັຖອາເມລິກາໄດ້ດໍາເນີນການສໍາຫຼວດປະຊາກອນທຸກໆ 10 ປີ, ໂດຍເລີ້ມ ແຕ່ປີ 1790 ເປັນຕົ້ນມາ. ການສໍາຫຼວດປະຊາກອນຊ່ວຍໃຫ້ສະພາຄອງເກຣສມີພາບທີ່ຖືກ ຕ້ອງກ່ຽວກັບບ່ອນທີ່ປະຊາກອນໃນຊາດອາໃສຢູ່, ແລະມັນຊ່ວຍໃນການຈັດສັນກອງທຶນ ແລະການບໍລິການໄດ້ຢ່າງຖືກຕ້ອງເໝາະສົມ. ນີ້ແມ່ນໜຶ່ງໃນແບບຟອມການສໍາຫຼວດ ປະຊາກອນທີ່ສັ້ນທີ່ສຸດໃນປະຫວັດສາດ, ມີພຽງ 10 ຄໍາຖາມງ່າຍໆ ຊຶ່ງໃຊ້ເວລາໃນການ ຕື່ມພຽງປະມານ 10 ນາທີເທົ່ານັ້ນ. ໃນບາງກໍລະນີ, ມັນຍັງຊ່ວຍແນະແນວທາງໃຫ້ແກ່ ຣັຖບານແຫ່ງຣັຖ, ທ້ອງຖິ່ນ ແລະ ຣັຖບານກາງ ໃນການຈັດຕັ້ງເຂດເລືອກຕັ້ງຜູ້ແທນໃໝ່, ໂດຍອີງຕາມຈໍານວນປະຊາກອນ. ການຕື່ມແບບຟອມການສໍາຫຼວດປະຊາກອນ ປີ 2010 ແມ່ນງ່າຍດາຍ, ສໍາຄັນ ແລະປອດພັຍ. ການປະກອບສ່ວນຂອງທ່ານມີຄວາມ ສໍາຄັນຢ່າງຍິ່ງ.

**ໂດຍການປະກອບສ່ວນໃນການສໍາຫຼວດປະຊາກອນປີ 2010 ນີ້, ທ່ານສາມາດຊ່ວຍສ້າງ ອະນາຄົດທີ່ດີຂຶ້ນໃຫ້ແກ່ໂຕທ່ານເອງແລະຄົນອື່ນໆທີ່ມີຄວາມສໍາຄັນຕໍ່ທ່ານ.**

## ທ່ານສາມາດຊ່ວຍຊຸມຊົນຂອງທ່ານໄດ້ເມື່ອທ່ານສົ່ງແບບຟອມການສໍາຫຼວດປະຊາກອນປີ 2010 ຂອງທ່ານກັບຄືນມາ.

ສ້າງຄວາມແຕກຕ່າງໃຫ້ແກ່ຊຸມຊົນຂອງທ່ານໂດຍການຖືກນັບເຂົ້າໃນຈໍານວນປະຊາກອນປີ 2010. ຈົ່ງປະກອບແບບຟອມການສໍາຫຼວດປະຊາກອນປີ 2010 ໃຫ້ຄົບຖ້ວນ ແລະສົ່ງກັບຄືນ ທັນທີທີ່ທ່ານໄດ້ຮັບໃນກ່ອງໄປສະນີຂອງທ່ານໃນເດືອນມີນາ.

ເພື່ອຮຽນຮູ້ເພີ່ມເຕີມ ຈົ່ງເບິ່ງທີ່

**2010census.gov**

ໂດຍການເຂົ້າຮ່ວມໃນການສໍາຫຼວດປະຊາກອນປີ 2010, ທ່ານສາມາດຊ່ວຍຊຸມຊົນ ຂອງທ່ານໃຫ້ໄດ້ຮັບເງິນສ່ວນແບ່ງຫຼາຍກວ່າ 400 ຕື້ໂດລາຕໍ່ປີຈາກກອງທຶນຣັຖບານກາງ ເພື່ອນໍາມາໃຊ້ໃນການປັບປຸງສິ່ງທີ່ຈໍາເປັນທີ່ສຸດ. ແບບຟອມການສໍາຫຼວດ ປະຊາກອນຂອງທ່ານສາມາດຊ່ວຍໃນການປັບປຸງໂຮງຮຽນ, ສະຖານພະຍາບານ ແລະອື່ນໆອີກຫຼາຍຢ່າງຫຼາຍແນວ. ເພາະສະນັ້ນ, ໃຫ້ຖືກນັບເຂົ້າໃນການສໍາຫຼວດປະຊາກອນ ປີ 2010 ແລະຊ່ວຍເພີ່ມອະນາຄົດໃຫ້ແກ່ຊຸມຊົນຂອງທ່ານ.



Issued November 2009
Form D-3288 (L)



# ການສໍາຫຼວດປະຊາກອນປີ 2010: ນີ້ແມ່ນວິທີການນັບປະຊາກອນ

United States Census 2010

ສໍາມະໂນຄົວຂອງສະຫະລັດອາເມຣິກາ

ມັນຢູ່ໃນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ

# 5 ຂັ້ນຕອນທີ່ສຳຄັນ
## ໃນການນັບຄົນທຸກຄົນໃນປະເທດ.

ບໍ່ວ່າທ່ານຈະແມ່ນສັນຊາດອາເມຣິກາ ຫຼື ບໍ່ແມ່ນສັນຊາດອາເມຣິກາ ກໍຕາມ, ທຸກຄົນທີ່ອາໃສຢູ່ໃນ ສະຫະຣັຖຕ້ອງຖືກນັບເຂົ້າໃນຈຳນວນປະຊາກອນປີ 2010. ຕໍ່ໄປນີ້ແມ່ນຫ້າຂັ້ນຕອນ ທີ່ທາງສຳນັກງານສຳຫຼວດປະຊາກອນຈະນຳໃຊ້ໃນການນັບຈຳນວນປະຊາກອນຂະໜາດໃຫຍ່ນີ້ໃຫ້ສຳເລັດ.

1

**ຂັ້ນທີ 1:** ການສຳຫຼວດປະຊາກອນກຳລັງດຳເນີນການ. ພະນັກງານສຳຫຼວດປະຊາກອນເດີນທາງໄປທົ່ວປະເທດໃນລະຫວ່າງເດືອນເມສາ ຫາ ເດືອນກໍຣະກະດາ 2009 ເພື່ອໄປກວດກາປັບປຸງຂໍ້ມູນກ່ຽວກັບທີ່ຢູ່ ແລະແຜນທີ່ຕ່າງໆ ຕາມທີ່ບັນທຶກໄວ້ໃນການສຳຫຼວດປະຊາກອນ ທີ່ຜ່ານມາ. ຂັ້ນຕອນນີ້ແມ່ນສຳຄັນ ເພາະວ່າຕຶກອາຄານຕ່າງໆທີ່ເຄີຍປາກົດໃນອະດີດ ອາດບໍ່ມີຢູ່ອີກຕໍ່ໄປ, ຫຼື ຊຸມຊົນອາດມີການກໍ່ສ້າງໃໝ່ໆເກີດຂຶ້ນຊຶ່ງຈຳເປັນຕ້ອງໄດ້ມີການບັນທຶກໄວ້.

2

**ຂັ້ນທີ 2:** ແບບຟອມການສຳຫຼວດປະຊາກອນປີ 2010 ສົ່ງມາຮອດທ່ານ. ແບບຟອມການ ສຳຫຼວດປະຊາກອນປີ 2010 ຈະຖືກສົ່ງທາງໄປສະນີໃນເດືອນມີນາ ເຖິງທີ່ຢູ່ຕ່າງໆຈຳນວນ ຫຼາຍກວ່າ 130 ລ້ານທີ່ຢູ່ທົ່ວປະເທດ, ຫຼືພະນັກງານສຳຫຼວດປະຊາກອນຈະຖືໄປສົ່ງໃຫ້ ໂດຍກົງ. ຄົວເຮືອນຕ່າງໆ ຄວນປະກອບແບບຟອມການສຳຫຼວດປະຊາກອນປີ 2010 ໃຫ້ຄົບຖ້ວນ ແລະສົ່ງກັບຄືນທາງໄປສະນີທັນທີ.

3

**ຂັ້ນທີ 3:** ມື້ສຳຫຼວດປະຊາກອນແມ່ນວັນທີ 1 ເມສາ 2010. ຄຳຕອບຂອງທ່ານໃນແບບຟອມການສຳຫຼວດປະຊາກອນປີ 2010 ຄວນລວມເອົາທຸກຄົນທີ່ອາໃສຢູ່ຕາມທີ່ຢູ່ ຂອງທ່ານ - ໂດຍບໍ່ຕ້ອງສົນໃຈວ່າ ເຂົາເຈົ້າແມ່ນພົນລະເມືອງ ຫຼືບໍ່, ແລະ ໂດຍບໍ່ຕ້ອງຄຳນຶງເຖິງອາຍຸດ້ວຍ. ຕາມກົດໝາຍແລ້ວ, ສຳນັກງານສຳຫຼວດປະຊາກອນບໍ່ສາມາດແບ່ງປັນ ຫຼືເປີດເຜີຍຂໍ້ມູນສ່ວນຕົວຂອງທ່ານໃຫ້ແກ່ ອົງການຂອງຣັຖບານໃດໆ ຫຼື ໜ່ວຍງານປະຕິບັດກົດໝາຍໃດໆ.

4

**ຂັ້ນທີ 4:** ຕິດຕາມກວດກາຍ້ອນວ່າທຸກຄົນມີຄວາມສຳຄັນ. ພະນັກງານສຳຫຼວດປະຊາກອນ ທີ່ເປັນທາງການຈະໄປຢ້ຽມຢາມຮອດເຮືອນຕໍ່ກັບຄົວເຮືອນທີ່ບໍ່ໄດ້ສົ່ງແບບຟອມ ການສຳຫຼວດປະຊາກອນປີ 2010. ການໄປຢ້ຽມຢາມເປັນການສ່ວນຕົວນີ້ ຈະເລີ້ມໃນທ້າຍເດືອນເມສາ ແລະ ສືບຕໍ່ໄປຮອດທ້າຍເດືອນເດືອນກໍຣະກະດາ. ພະນັກງານສຳຫຼວດປະຊາກອນທີ່ເປັນທາງການຈະມີກາສຳຫຼວດປະຊາກອນ ແລະ ຖົງທີ່ບົ່ງບອກເຖິງການເປັນພະນັກງານທີ່ແທ້ຈິງ.

5

**ຂັ້ນທີ 5:** ໄດ້ຜົນການສຳຫຼວດ: ສຳນັກງານສຳຫຼວດປະຊາກອນຈະນັບປະຊາຊົນທຸກຄົນ ແລະລາຍງານຈຳນວນປະຊາກອນເຖິງປະທານາທິບໍດີແຫ່ງສະຫະຣັຖ ພາຍໃນວັນທີ 31 ທັນວາ 2010. ຈຳນວນນັ້ນລວມມີ ຈຳນວນນັບປະຊາກອນທັງໝົດ ແລະຈຳນວນຂອງ ຜູ້ແທນສະພາແຫ່ງສະຫະຣັຖທີ່ກຳນົດໃຫ້ສຳຫຼັບແຕ່ລະຣັຖ.

# ທ່ານຄວນຈະຖືກນັບຢູ່ບ່ອນໃດ?

ສຳຫຼັບການສຳຫຼວດປະຊາກອນປີ 2010, ປະຊາຊົນສ່ວນຫຼາຍແມ່ນຈະຖືກນັບຢູ່ໃນສະຖານທີ່ ຢູ່ອາໃສທີ່ເຂົາເຈົ້າຢູ່ ຫຼື ໃຊ້ເປັນບ່ອນນອນຫຼັກ. ຢ່າງໃດກໍຕາມ, ບາງຄົນ ຫຼືບາງກຸ່ມອາດຢູ່ໃນສະຖານະການການຢູ່ອາໃສທີ່ພິເສດໃດໜຶ່ງ. ກົດລະບຽບກ່ຽວກັບການຢູ່ອາໃສຂອງ ສຳນັກງານສຳຫຼວດປະຊາກອນຊ່ວຍໃນການພິຈາລະນາວ່າ ສະຖານທີ່ແນວໃດແດ່ທີ່ປະຊາຊົນດັ່ງກ່າວນີ້ຄວນຈະຖືກນັບ.

## ສະຖານະການການຢູ່ອາໃສທົ່ວໄປ

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ອາໃສຢູ່ທີ່ເຮືອນຂອງເຂົາເຈົ້າເອງ ແລະບໍ່ໄດ້ອາໃສຢູ່ບ່ອນອື່ນເລີຍ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ ເຮືອນຂອງເຂົາເຈົ້າເອງ |
| ຢູ່ໃນລະຫວ່າງການພັກຮ້ອນ ຫຼື ເດີນທາງເພື່ອທຸລະກິດ | ເຮືອນຂອງເຂົາເຈົ້າຊຶ່ງເປັນບ່ອນທີ່ເຂົາເຈົ້າອາໃສຢູ່ ແລະ ນອນເປັນຫຼັກ |
| ບໍ່ໄດ້ອາໃສຢູ່ບ້ານຜູ້ໃດເປັນປະຈຳ ຫຼື ມີປະສົບການເປັນຄົນບໍ່ມີເຮືອນຢູ່ | ບ່ອນຢູ່ອາໃສທີ່ເຂົາເຈົ້າກຳລັງພັກອາໃສຢູ່ໃນມື້ສຳຫຼວດປະຊາກອນ |

## ນັກຮຽນວິທະຍາໄລ

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ອາໃສຢູ່ກັບພໍ່ແມ່ຂອງຕົນ ຫຼື ຜູ້ປົກຄອງໃນຂະນະ ທີ່ເຂົ້າຮຽນໃນວິທະຍາໄລໃນສະຫະຣັຖອາເມລິກາ | ເຮືອນພໍ່ແມ່ |
| ອາໃສຢູ່ໄກຈາກເຮືອນຂອງພໍ່ແມ່ ໃນຂະນະທີ່ກຳລັງຮຽນໃນວິທະຍາໄລໃນສະຫະຣັຖອາເມລິກາ | ເຮືອນພັກໃນເຂດສະຖານສຶກສາ ຫຼື ນອກເຂດສະຖານສຶກສາ |
| ເຂົ້າຮຽນໃນວິທະຍາໄລນອກສະຫະຣັຖອາເມລິກາ | ບໍ່ຖືກນັບເຂົ້າໃນຈຳນວນປະຊາກອນ |

## ບຸກຄົນທີ່ອາໃສໃນສະຖານທີ່ທີ່ເປັນບ່ອນກຸ່ມຄົນຫຼາຍຄົນອາໃສຢູ່

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ສະຖານທີ່ທີ່ກຸ່ມປະຊາຊົນອາໃສຢູ່ ເຊັ່ນ ຄຸກ ຫຼື ຫ້ອງຂັງ, ເຮືອນທີ່ຢູ່ກັນເປັນກຸ່ມ, ເຮືອນພັກອາໃສ ສຳຫຼັບຜູ້ທີ່ຖືກທາລຸນພາຍໃນຄອບຄົວ, ແລະ ບ່ອນພັກອາໃສສຸກເສີນ ຫຼື ຊົ່ວຄາວ ໄດ້ ສຳຫຼັບບຸກຄົນທີ່ບໍ່ມີເຮືອນຢູ່ | ສະຖານທີ່ຂອງກຸ່ມ |

## ພົນລະເມືອງຕ່າງຊາດໃນສະຫະຣັຖອາເມລິກາ

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ພົນລະເມືອງຂອງຕ່າງປະເທດທີ່ອາໃສຢູ່ໃນສະຫະຣັຖ ອາເມລິກາ | ສະຖານທີ່ອາໃສທີ່ເຂົາເຈົ້າຢູ່ແລະນອນເປັນຫຼັກ |
| ພົນລະເມືອງຕ່າງຊາດທີ່ມາຢ້ຽມຢາມໃນສະຫະຣັຖ ອາເມລິກາ ໂດຍມາພັກຮ້ອນ ຫຼື ມາເພື່ອທຸລະກິດ | ບໍ່ຖືກນັບເຂົ້າໃນຈຳນວນປະຊາກອນ |
| ພົນລະເມືອງຕ່າງຊາດທີ່ອາໃສຢູ່ໃນສະຫະຣັຖອາເມລິກາ ເພື່ອມາຮຽນໃນວິທະຍາໄລ | ເຮືອນພັກໃນເຂດສະຖານສຶກສາ ຫຼື ນອກເຂດສະຖານສຶກສາ |

## ບຸກຄະລາກອນທາງທະຫານຂອງສະຫະຣັຖອາເມລິກາ

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ຢູ່ໃນຄ້າຍທະຫານໃນສະຫະຣັຖອາເມລິກາ | ຄ້າຍທະຫານ |
| ຢູ່ໃນຖານທັບ ຫຼື ນອກຖານທັບໃນສະຫະຣັຖອາເມລິກາ, ແຕ່ບໍ່ໄດ້ຢູ່ໃນຄ້າຍທະຫານ | ສະຖານທີ່ອາໃສທີ່ເຂົາເຈົ້າຢູ່ແລະນອນເປັນຫຼັກ |
| ຢູ່ໃນກອງທັບແລະອາໃສຢູ່ຕ່າງປະເທດ | ນັບໂດຍໃຊ້ບັນທຶກຂອງທະຫານສຳຫຼັບທີ່ຢູ່ບ້ານ |

## ບຸກຄົນທີ່ມີການໂຍກຍ້າຍ

| ສະຖານະການການຢູ່ອາໃສ | ສະຖານທີ່ທີ່ເຂົາເຈົ້າຈະຖືກນັບ |
|---|---|
| ພັກອາໃສຢູ່ໃນສະຖານທີ່ຫຼາຍກວ່າໜຶ່ງແຫ່ງ (ເຊັ່ນ ເຮືອນຕາກອາກາດ) ຫຼື ທີ່ສະຖານທີ່ພັກຊົ່ວຄາວ, ເຊັ່ນ ບ່ອນຈອດຣົຖເຄື່ອນທີ່, ບ່ອນຕັ້ງແຄມບ໌, ທ່າຈອດເຮືອ, ສະໜາມແຂ່ງ, ບ່ອນຫລິ້ນລະຄອນສັດ ຫຼື ບ່ອນຈັດງານເທດສະການຕ່າງໆ | ສະຖານທີ່ອາໃສທີ່ເຂົາເຈົ້າຢູ່ແລະນອນເປັນຫຼັກ<br>ໃນສະຖານທີ່ພັກອາໃສທີ່ເຂົາເຈົ້າກຳລັງອາໃສຢູ່ໃນມື້ທີ່ມີການສຳຫຼວດປະຊາກອນ, ຖ້າຫາກວ່າເຂົາເຈົ້າໃຊ້ເວລາພັກອາໃສຢູ່ໃນສະຖານທີ່ ແຕ່ລະແຫ່ງທ່ໍກັນ |